PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ 170/PTL/2018

ນະຄອນຫຼວງວຽງຈັນ, ວັນທີ 14 ກໍລະກົດ 2018

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2018

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03/4/2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ 07/1/2011.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 5/2018 ວັນທີ 13 ກໍລະກົດ 2018, ເວລາ 9:30ໂມງ ທີ່ຫ້ອງປະຊຸມ ສຳນັກງານ ປທລ ໂດຍມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດລຸ່ມນີ້:

ວາລະທີ 1: ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານຄັ້ງທີ 4/2018, ເມື່ອວັນທີ 15 ພຶດສະພາ 2018;

ວາລະທີ 2: ຮັບຮອງເອົາບົດສະຫຼຸບທາງດ້ານການເງິນປະຈຳໄຕມາດ 1/2018;

ວາລະທີ 3: ຮັບຮອງເອົາຊື່ຢ່າງເປັນທາງການຂອງ 2 ບໍລິສັດລູກຄື:

1. ບໍລິສັດ ປິໂຕຣເທຣດ ພູມ່າ ນຳເຂົ້າ-ສົ່ງອອກ ຈຳກັດ,
   Petrotrade Puma Import-Export Co., Ltd
2. ບໍລິສັດ ປິໂຕຣເທຣດ ພູມ່າ ດິສທະບິວຊັນ ຈຳກັດ
   Petrotrade Puma Distribution Co., Ltd

ວາລະທີ 4: ຮັບຮອງໃຫ້ປະທານສະພາບໍລິຫານຕ່າງໜ້າ ປທລ ເຊັນສັນຍາຮ່ວມທຶນ ກັບ Puma Energy (Singapore) Pte. Ltd ກັບ 2 ບໍລິສັດລູກ ໂດຍຕາມມະຕິຂອງກອງປະຊຸມສາມັນຜູ້ຖືຮຸ້ນ ປທລ ປະຈຳປີ 2017 ຄັ້ງວັນທີ 27 ເມສາ 2018 ແລະ ຕາມມະຕິຂອງກອງປະຊຸມ

ວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2018 ຄັ້ງວັນທີ 1 ມີຖຸນາ 2018 ໃນອັດຕາສັດສ່ວນການຖືຄອງຮຸ້ນ ແມ່ນອີງຕາມກົດໝາຍວ່າດ້ວຍການຮ່ວມທຶນກັບຕ່າງປະເທດ ໃນນີ້ລວມມີ:

- ຮັບຮອງໃຫ້ ບໍລິສັດ ປິໂຕຣເທຣດ ພຸມ່າ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປິໂຕຣເທຣດ ພຸ ມ່າ ດິສທະບິວຊັນ ຈຳກັດ ລົງນາມໃນການເຊັນສັນຍາຜູ້ຖືຮຸ້ນ ກັບ Puma Energy (Singapore) Pte. Ltd
- ຮັບຮອງໃຫ້ ບໍລິສັດ ປິໂຕຣເທຣດ ພຸມ່າ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປິໂຕຣເທຣດ ພຸ ມ່າ ດິສທະບິວຊັນ ຈຳກັດ ໃນການລົງນາມເຊັນ ເອກະສານການໂອນຮຸ້ນ ແລະ ເອກະສານທາງ ການຄ້າກັບ Puma Energy (Singapore) Pte. Ltd

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company

ຈັນທອນ ສິດທິໄຊ